


ທ່ານນາງ ສູນທອນ ໄຊຍະຈັກ ລັດຖະມົນຕີ ຊ່ວຍວ່າການ ກະຊວງການຕ່າງປະເທດ ສ.ປ.ປ.ລາວ (ທາງກາງເບື້ອງຂວາ) ແລະ ທ່ານ Daniel Russel ລັດຖະມົນຕີ ຊ່ວຍວ່າການ ກະຊວງການຕ່າງປະເທດ ສະຫະລັດອາເມລິກາ (ທາງກາງເບື້ອງຊ້າຍ) ພ້ອມດ້ວຍຄະນະນຳ ຝ່າຍລາວ ແລະ ອາເມລິກາ ທີ່ ກອງປະຊຸມພົບປະ-ປຶກສາຫາລືຮອບດ້ານສອງຝ່າຍ, ວັນທີ 19 ທີ່ ນະຄອນ ວໍຊິງຕັນ ດີຊີ.

## ສະຫະລັດອາເມລິກາ ແລະ ສປປ ລາວ ຮ່ວມກັນ ສະຫຼຸບຜົນສຳເລັດ<br>ກອງປະຊຸມພົບປະ-ປຶກສາຫາລືຮອບດ້ານສອງຝ່າຍ

ສະຫະລັດອາເມລິກາ ແລະ ສປປ ລາວ ສຳເລັດ ກອງປະຊຸມພົບປະ-ປຶກສາຫາລືຮອບດ້ານສອງຝ່າຍ ຄັ້ງທີທົກ 6th ທີ່ໄດ້ຖືກຈັດຂື້ນ ທີ່ ນະຄອນ ວໍຊິງຕັນ ດີຊີ. ກອງປະຊຸມນີ້ໄດ້ຈັດໃຫ້ມີຂື້ນໃນທຸກໆປີ, ແຕ່ລະປີ ມີການປ່ຽນສະຖານທີ່ຈັດກອງປະຊຸມ ລະຫວ່າງ ນະຄອນຫຼວງວຽງຈັນ ແລະ ນະຄອນ ວໍຊິງຕັນ ດີຊີ. ຄະນະຜູ້ແທນຝ່າຍລາວ ໄດ້ພົບປະກັບ ເຈົ້າໜ້າທີ່ ສະຫະລັດອາເມລິກາ ຈາກ ກະຊວງການຕ່າງປະເທດ, ກະຊວງປ້ອງກັນປະເທດ, ຫ້ອງການຜູ້ຕາງໜ້າການຄ້າ ສະຫະລັດອາເມລິກາ, ອົງການພັດທະນາສາກົນ ສະຫະລັດອາເມລິກາ ແລະ ໜ່ວຍງານອາສາສະໝັກເພື່ອສັນຕິພາບ.

ໃນໄລຍະການພົບປະ ປຶກສາຫາລື ອັນຍາວນານ, ທ່ານ Daniel Russel ລັດຖະມົນຕີ ຊ່ວຍວ່າການ ກະຊວງການຕ່າງປະເທດ ສະຫະລັດອາເມລິກາ ແລະ ຄະນະຜູ້ແທນຝ່າຍລາວ ຊື່ງນຳໂດຍທ່ານນາງ ສູນທອນ ໄຊຍະຈັກ ມີຄວາມເຫັນດີເປັນເອກກະພາບ ທີ່ຈະຮັດແໜ້ນ ແລະ ສົ່ງເສີມ ເພີ້ມທະວີ ສາຍພົວພັນ ແລະ ການຮ່ວມມື ຮອບດ້ານ ລະຫວ່າງ ສະຫະລັດອາເມລິກາ ແລະ ສປປ ລາວ ໃຫ້ເຂົ້າ ສູ່ລວງເລິກກ່ວາເກົ່າ. ທັງສອງຝ່າຍ ໄດ້ເນັ້ນໜັກເຖິງ ຄວາມໝາຍແລະຄວາມສຳຄັນ ຂອງ ສາຍພົວພັນ ການທູດ ລະຫວ່າງ ສອງຊາດ ຄົບຮອບ 60 ປີ ແລະ ປຶກສາຫາລືກັນ ໃນການສະເຫຼີມສະຫຼອງ ງານຄົບຮອບນີ້ຕະຫຼອດປີ, ຮວມທັງ ງານສະເຫຼີມສະຫຼອງ ວັນຊາດ ສະຫະລັດອາເມລິກາ ທີ່ຈະມາເຖິງໃນມໍ່ໆນີ້.

ວຽກງານອັນພົ້ນເດັ່ນສຳຄັນທີ່ສຸດ ໃນໄລຍະການພົບປະ ແລະ ປຶກສາຫາລື ແມ່ນ ທີ່ ທ່ານ Daniel Russel ລັດຖະມົນຕີ ຊ່ວຍວ່າການ ກະຊວງການຕ່າງປະເທດ ສະຫະລັດອາເມລິກາ ແຈ້ງໃຫ້ຊາບວ່າ ສະຫະລັດອາເມລິກາ ມີຄວາມຍິນດີເພີ້ມທຶນຊ່ວຍເຫຼືອ ສະໜັບສະໜູນ ໃຫ້ແກ່ຂົງເຂດວຽກງານການເກັບກູ້ລະເບີດບໍ່ທັນແຕກ ໃຫ້ແກ່ ສປປ ລາວ ຈາກ $13 ລ້ານໂດລາສະຫະລັດ ເພີ້ມຂື້ນ ເປັນຈຳນວນ $15 ລ້ານໂດລາສະຫະລັດ. ທ່ານ Daniel Russel ລັດຖະມົນຕີ ຊ່ວຍວ່າການ ກະຊວງການຕ່າງປະເທດ ສະຫະລັດອາເມລິກາ ໄດ້ເນັ້ນໜັກ ແລະ ຊົມເຊີຍເຖິງ ຜົນສຳເລັດ ແລະ ຄວາມຄືບໜ້າ ທີ່ ສປປ ລາວ ໄດ້ຕັ້ງໃຈມຸ້ງໝັ້ນ ຕໍ່ກັບ ວຽກງານສຳຫຼວດ, ຄົ້ນຫາ ແລະ ເກັບກູ້ລະເບີດທີ່ຍັງບໍ່ທັນແຕກ; ທ່ານຍັງໄດ້ກ່າວຕື່ມອີກວ່າ ສະຫະລັດອາເມລິກາ ມີຄວາມ ມຸ້ງໝັ້ນທີ່ຈະສືບຕໍ່ຊ່ວຍເຫຼືອ ສປປ ລາວ ເພື່ອເຮັດໃຫ້ການດຳເນີນວຽກງານ ນີ້ ໃຫ້ນັບມື້ນັບໄວຂື້ນ ເພື່ອຫຼີກລ່ຽງບໍ່ໃຫ້ມີຜູ້ຖືກເຄາະຮ້າຍເພີ້ມອີກ ແລະ ເພື່ອສົ່ງເສີມ ແລະຊ່ວຍເຫຼືອ ການຂະຫຍາຍຕົວທາງດ້ານເສດຖະກິດ ຂອງ ສປປ ລາວ ໃຫ້ນັບມື້ ນັບເຕີບໃຫຍ່ຂະຫຍາຍຕົວ.

ໃນການພົບປະ-ປຶກສາຫາລື, ທັງສອງຝ່າຍ ໄດ້ທົບທວນຄືນຮ່ວມກັນ ກ່ຽວກັບວຽກງານການພັດທະນາຮອບດ້ານ ໃນຂົງເຂດອາຊີ, ທ່ານລັດຖະມົນຕີ ຊ່ວຍວ່າການ Russel ຍັງໄດ້ເນັ້ນໜັກເຖິງ ຄວາມມຸ້ງໝັ້ນ ຂອງ ສະຫະລັດອາເມລິກາ ໃນສາຍພົວພັນ ແບບສ້າງສັນ ແລະ ຕ່າງຝ່າຍຕ່າງມີຜົນ ກັບ ສປປ ລາວ ແລະ ບັນດາປະເທດ ຕ່າງໆໃນກຸ່ມ ອາຊຽນ. ຄະນະຜູ້ແທນລາວ ໄດ້ສົນທະນາ ກ່ຽວກັບແຜນງານ

ທີ່ ສປປ ລາວ ຈະກ້າວຂື້ນເປັນ ປະທານອາຊຽນ ໃນປີ 2016 ນີ້. ພ້ອມນີ້ທັງສອງຝ່າຍ ຍັງໄດ້ ທົບທວນຄືນ ກ່ຽວກັບ ກົນໄກຕ່າງໆ ເພື່ອອຳນວຍຄວາມສະດວກ ແລະ ສົ່ງເສີມ ໃນຂອບເຂດການຮ່ວມມືສອງຝ່າຍ ໃນວຽກງານການຄ້າ ແລະ ການລົງທຶນ. ທັງສອງຝ່າຍ ຕົກລົງເຫັນດີເປັນເອກກະພາບ

ໃນການບັນລຸເປົ້າໝາຍ ໃນໂຄງການຊ່ວຍເຫຼືອ ເພື່ອການພັດທະນາຮອບດ້ານ ໃຫ້ແກ່ ສປປ ລາວ, ມີມູນຄ່າ ເຖິງ $40 ລ້ານໂດລາສະຫະລັດ ໃນປີ 2014 ແລະ ສຸມໃສ່ ໃນວຽກງານ ໂພຊະນາການ, ສາທາລະນະສຸກ, ການສຶກສາ, ການຄ້າ, ສະພາບແວດລ້ອມ, ລະບົບ ຍຸຕິທຳ ແລະ ວຽກງານ ຕ້ານຢາເສບຕິດ.